2-11 ເມືອງກາລະສິນ

2-12 ເມືອງພູແລ່ນຊ້າງ

2-13 ເມືອງມະຫາສາຣະຄາມ

ໂຮມມີ 13 ເມືອງ ກັບບັນດາເມືອງນ້ອຍ ທີ່ຂຶ້ນຕໍ່ເມືອງເຫລົ່ານີ້ອີກ.

3. ມົນທົນລາວກາງ. ມົນທົນລາວກາງ ປະກອບດ້ວຍເມືອງຕ່າງໆ ຄື:

3-1 ເມືອງນະຄອນຣາຊສີມາ

3-2 ເມືອງພິມາຍ

3-3 ເມືອງປັກທຸງຊັຍ

3-4 ເມືອງຈັນທຶກ

3-5 ເມືອງຕ່າງໆ ໃນບໍຣິເວນເມືອງນາງລອງ ແລະ ເມືອງຊັຍພູມ ຄື:

3-6 ເມືອງນາງລອງ

3-7 ເມືອງບູຣີຣັມ

3-8 ເມືອງປະໂຄນຊັຍ

3-9 ເມືອງພຸດໄທສົງ

3-10 ເມືອງຣັຕນະບູຣີ

3-11 ເມືອງຊັຍພູມ

3-12 ເມືອງພູຂຽວ

3-13 ເມືອງກະເສດສົມບູນ

3-14 ເມືອງຈະຕຸຣັດ

ສຳລັບມົນທົນລາວພວນນີ້ ແຕ່ກ່ອນຣັຖບານສຍາມ ໄດ້ຕັ້ງສຳນັກງານວ່າການຂອງຂ້າຫລວງຢູ່ເມືອງໜອງຄາຍ. ເມື່ອຝຣັ່ງເສສໄດ້ດິນລາວທາງຝັ່ງຊ້າຍແມ່ນ້ຳຂອງໝົດແລ້ວ ຣັຖບານສຍາມຈຶ່ງຍ້າຍສຳນັກງານຂ້າຫລວງໄປຕັ້ງຢູ່ບ້ານໝາກແຂ້ງ ຄື ເມືອງອຸດອນ ດຽວນີ້.

ສ່ວນມົນທົນລາວກາວນັ້ນ ໄດ້ຕັ້ງສຳນັກງານຂ້າຫລວງຢູ່ທີ່ເມືອງອຸບົນ. ການປົກຄອງສຍາມຕໍ່ຫົວເມືອງລາວໃນສມັຍນັ້ນ ກໍບໍ່ມີຜິດແຜກແຕກຕ່າງໄປຈາກ ປະເພນີການປົກຄອງຂອງລາວມາແຕ່ດັ້ງເດີມເລີຍ. ຂ້າຫລວງສຍາມທີ່ມາປົກຄອງ ກໍມີແຕ່ຄອຍສອດສ່ອງເບິ່ງການເຄື່ອນໄຫວ ການກໍ່ຈະລາຈົນ ຫລືການກໍ່ກະບົດຕໍ່ຣັຖບານສຍາມທໍ່ນັ້ນ ນອກຈາກນີ້ ກໍມີແຕ່ການເກັບເງິນສ່ວຍຈາກຊາຍ